ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ລັດຖະບານ ສປປ ລາວ ມອບຫຼຽນກາ ມິດຕະພາບແກ່ທະນາຄານແຫ່ງປະເທດໄທ




ເພື່ອເປັນການຈາລຶກໝາກຜົນແຫ່ງການຮ່ວມມື ທັງເປັນການເສີມສ້າງມິດຕະພາບ ແລະ ການຮ່ວມມືທີ່ດີທີ່ມີມາຕະຫຼອດໄລຍະ 25 ປີຜ່ານມາ ລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງປະເທດໄທ. ສະນັ້ນ; ໃນວັນທີ 22 ມິຖຸນາ 2019 ທີ່ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ລັດຖະບານແຫ່ງ ສປປ ລາວ ໄດ້ຕົກລົງມອບຫຼຽນກາມິດຕະພາບແກ່ທະນາຄານແຫ່ງປະເທດໄທໂດຍແມ່ນທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໃຫ້ກຽດປະດັບຫຼຽນກາດັ່ງກ່າວຊຶ່ງແມ່ນທ່ານ ດຣ.ວິຣະໄທ ສັນຕິປຣະພົບ ຜູ້ວ່າການທະນາຄານແຫ່ງປະເທດໄທ ເປັນຜູ້ຮັບ ໂດຍການເປັນສັກຂີພິຍານຂອງພະນັກງານທັງ 2 ຝ່າຍ ແລະ ໃນຂະນະດຽວກັນນີ້ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງປະເທດໄທກໍ່ໄດ້ບັນລຸການເຊັນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການການຄຸ້ມຄອງທະນາຄານທຸລະກິດ.

ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງປະເທດໄທມີການພົວພັນ ແລະ ຮ່ວມມືນຳກັນມາເປັນເວລາ 2 ທົດສະຫວັດກວ່າ ຊຶ່ງໃນນີ້ທະນາຄານແຫ່ງປະເທດໄທໄດ້ສ້າງໂຄງການຊ່ວຍເຫຼືອດ້ານການສຶກສາໃນຫຼັກສູດປະລິນຍາໂທສາຂາບໍລິຫານທຸລະກິດ ຮ່ວມລາວ-ໄທໃນໄລຍະປີ 1994-1998 ແລະ ມີພະນັກງານຂອງ 2 ທະນາຄານກາງເຂົ້າສຶກສາໃນໂຄງການດັ່ງກ່າວ; ໃນທ້າຍປີ 2003 ສອງທະນາຄານກາງ ໄດ້ບັນລຸການເຊັນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືທະວິພາຄີຮ່ວມກັນ ຊຶ່ງໄດ້ກາຍເປັນຂີດໝາຍສຳຄັນໃຫ້ແກ່ການເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມື ໂດຍກຳນົດໃຫ້ມີການພົບປະໃນຂັ້ນການນຳ 2 ປີຕໍ່ຄັ້ງ; ນອກນີ້, ຍັງມີການຊ່ວຍເຫຼືອທາງດ້ານວິຊາການ, ການແລກປ່ຽນຄວາມຮູ້ ແລະ ຖອດຖອນບົດຮຽນທີ່ຕິດພັນກັບວຽກງານວິຊາສະເພາະ ແລະ ເສີມສ້າງຄວາມອາດສາມາດຂອງພະນັກງານຮ່ວມກັນຢ່າງເປັນປົກກະຕິໃນທຸກໆປີ.




ນັບແຕ່ປີ 2004 ມາເຖິງປັດຈຸບັນ; ທະນາຄານແຫ່ງປະເທດໄທໄດ້ສົ່ງຊ່ຽວຊານມາຈັດສຳມະນາຢູ່ທະນາຄານແຫ່ງ ສປປ ລາວ ໃນຫຼາຍຫົວຂໍ້ ຊຶ່ງມີພະນັກງານເຂົ້າຮ່ວມ 950 ເທື່ອຄົນ ແລະ ພະນັກງານທະນາຄານແຫ່ງ ສປປ ລາວ ໄປຖອດຖອນບົດຮຽນຢູ່ ປະເທດໄທ 40 ຫົວຂໍ້ ມີພະນັກງານເຂົ້າຮ່ວມ 265 ເທື່ອຄົນ; ພ້ອມດຽວກັນນີ້, ທະນາຄານແຫ່ງ ປະເທດໄທ ຍັງໃຫ້ທຶນການສຶກສາລະດັບປະລິນຍາຕີ-ປະລິນຍາໂທໃຫ້ທະນາຄານກາງຂອງລາວ ຈຳນວນໜຶ່ງ, ສະໜອງປຶ້ມຕຳລາໃຫ້ຫ້ອງສະໝຸດທະນາຄານເກືອບ 1.000 ເຫຼັ້ມ; ຄຽງຄູ່ກັນນີ້, ທະນາຄານແຫ່ງປະເທດໄທຍັງລິເລີ່ມສ້າງໃຫ້ມີກອງປະຊຸມທຸລະກິດ ລາວ-ໄທ ໂດຍສ້າງໂອກາດໃຫ້ທະນາຄານທຸລະກິດຂອງ 2 ປະເທດມີໂອກາດແລກປ່ຽນກັນ ໂດຍຜັດປ່ຽນກັນເປັນເຈົ້າພາບໃນແຕ່ລະປີ ແລະ ຍັງຈັບຄູ່ຮ່ວມທາງດ້ານທຸລະກິດລະຫວ່າງທະນາຄານທຸລະກິດ ລາວ ແລະ ໄທ; ນອກຈາກການຮ່ວມມືດ້ານວິຊາການ ແລະ ກິລາມິດຕະພາບແລ້ວ, ຍັງມີການຮ່ວມມືໃນວຽກງານຄຸ້ມຄອງຫຼັກຊັບ, ວຽກງານຊຳລະສະສາງ ແລະ ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ທະນາຄານແຫ່ງປະເທດໄທ ຍັງປະກອບສ່ວນຊ່ວຍເຫຼືອບັນເທົາທຸກແກ່ຜູ້ປະສົບໄພພິບັດຢູ່ເມືອງ ສະໜາມໄຊ ແຂວງອັດຕະປື 2 ຄັ້ງ ເປັນເງິນຈຳນວນໜຶ່ງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**